ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===---00---===

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 46 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 06 AUG 2021

# ຂໍ້ຕົກລົງວ່າດ້ວຍ
# ການແຕ່ງຕັ້ງຄະນະທີ່ປຶກສາ ແລະ ຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ, ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013;
- ອີງຕາມບົດບັນທຶກກອງປະຊຸມ ກ່ຽວກັບ ວຽກງານປະເມີນມູນຄ່າຊັບສິນ ສະບັບເລກທີ 06/ສຄຄຊ, ລົງວັນທີ 21 ມັງກອນ 2021
- ອີງຕາມບົດບັນທຶກກອງປະຊຸມ ກ່ຽວກັບ ວຽກງານປະເມີນມູນຄ່າຊັບສິນ ສະບັບເລກທີ 22/ສຄຄຊ, ລົງວັນທີ 04 ສິງຫາ 2021.

## ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

**ມາດຕາ 1.** ແຕ່ງຕັ້ງຄະນະທີ່ປຶກສາສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ນ ວຽງດາລີ ສຸພານຸວົງ ຮອງຫົວໜ້າສຳນັກງານ ຄຄຊ ຫົວໜ້າຄະນະ;
2. ທ່ານ ບຸນຈິງ ກອງຄຳ ຫົວໜ້າພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ຮອງຫົວໜ້າຄະນະ;
3. ທ່ານ ໄພວັນ ແສງພະຈັນ ຮອງຫົວໜ້າພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ຮອງຫົວໜ້າຄະນະ;
4. ທ່ານ ສຸລະສິດ ຍົດລືໄຊ ວິຊາການພະແນກຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ຄະນະ;
5. ທ່ານ ນ ວິລະດາ ເລີດນິຍົມ ວິຊາການພະແນກນິຕິກຳ ຄະນະ;

**ມາດຕາ 2.** ຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ມີພາລະບົດບາດ, ສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

- ຊຸກຍູ້, ໃຫ້ການແນະນຳ, ປຶກສາ ແລະ ປະສານສົມທົບ ຕໍ່ຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນໃນການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອຄົ້ນຄວ້າຄວາມພ້ອມໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ແລະ ພາຍຫຼັງການສ້າງຕັ້ງຊົມລົມ;
- ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຊຸກຍູ້ສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ແລະ ຊຸກຍູ້ຫັນຊົມລົມເປັນສະມາຄົມບໍລິສັດປະເມີນມູນຄ່າຊັບສິນ ໃນຕໍ່ໜ້າ;

- ປະສານສົມທົບກັບບໍລິສັດປະເມີນມູນຄ່າຊັບສິນ ເພື່ອຄັດເລືອກເອົາບຸກຄະລາກອນທີ່ຈະປະກອບເຂົ້າໃນໂຄງຮ່າງການຈັດຕັ້ງຂອງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ຕາມມະຕິ ກອງປະຊຸມຄັ້ງປະຖົມມະລືກຂອງ ສຳນັກງານ ຄຄຊ ກັບ ຄະນະອຳນວຍການບໍລິສັດປະເມີນມູນຄ່າຊັບສິນ ໂດຍການເປັນປະທານກອງປະຊຸມຂອງ ສຳນັກງານ ຄຄຊ;
- ຄົ້ນຄວ້າການສະເໜີ ຕາມສິດ ແລະ ໜ້າທີ່ ຂອງຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນໃນມາດຕາ 4 ເພື່ອລາຍງານ ທ່ານຫົວໜ້າສຳນັກງານ ພິຈາລະນາ;
- ຕິດຕາມການປະຕິບັດແຜນການເຮັດວຽກຕາມ ສິດ ແລະ ໜ້າທີຂອງຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ຕາມການລາຍງານ;
- ຈັດກອງປະຊຸມຮ່ວມກັບຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ກ່ຽວກັບ ຄວາມຄືບໜ້າໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ໃນທຸກໆວັນທີ 30 ຂອງເດືອນທີສາມ ຂອງໄຕມາດ ແລະ ຖ້າມື້ຈັດກອງປະຊຸມ ກົງກັບ ມື້ພັກລັດຖະການ ຫຼື ວັນ ເສົາ-ອາທິດ ແມ່ນໃຫ້ຈັດກອງປະຊຸມໃນມື້ຖັດໄປ. ກໍລະນີ ຈຳເປັນ ກໍ່ສາມາດຮຽກປະຊຸມວິສາມັນໄດ້;
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຂອງຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນຕໍ່ ຫົວໜ້າສຳນັກງານ ຄຄຊ ປະຈຳເດືອນ, ໄຕມາດ, 6 ເດືອນ ແລະ ປີ;
- ປະຕິບັດວຽກອື່ນໆຕາມການມອບໝາຍຂອງ ທ່ານຫົວໜ້າສຳນັກງານ ຄຄຊ.

**ມາດຕາ 3.** ແຕ່ງຕັ້ງຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ສົມສີ ແສນຄຳ ຜູ້ອຳນວຍການບໍລິສັດ ເອເຊຍໂລຕັດ ປະເມີນມູນຄ່າຊັບສິນ ຫົວໜ້າຄະນະ;
2. ທ່ານ ທຸມພັນ ໄຊຍະລາດ ຜູ້ອຳນວຍການບໍລິສັດ ລາວວາລູ ປະເມີນມູນຄ່າຊັບສິນ ຮອງຫົວໜ້າຄະນະ;
3. ທ່ານ ປອ. ປະສິດທິຜົນ ພອນວັນທາ ຮອງຜູ້ອຳນວຍການບໍລິສັດ ເຄເຄລາວ ປະເມີນມູນຄ່າຊັບສິນ ຮອງຫົວໜ້າຄະນະ;
4. ທ່ານ ນົກພະລົນ ທຳນຸວົງ ຜູ້ອຳນວຍການບໍລິສັດ ລາວປະເມີນມູນຄ່າຊັບສິນ ຄະນະ;
5. ທ່ານ ເທວິນ ຫຼັກຄຳ ຜູ້ອຳນວຍການບໍລິສັດ ປະເມີນມູນຄ່າຊັບສິນ ລິດແອັບໄພຣໄຊ ຄະນະ;
6. ທ່ານ Worasak Chotchalamsagunchai ຜູ້ອຳນວຍການບໍລິສັດ ຊົມ ປະເມີນມູນຄ່າຊັບສິນ ຄະນະ;
7. ທ່ານ Nie Lei ຜູ້ອຳນວຍການບໍລິສັດ ປະເມີນມູນຄ່າຊັບສິນ ແກຣນທ໌ ເຊີແມນ (ລາວ) ຄະນະ;
8. ທ່ານ Xiao Yong ຜູ້ອຳນວຍການບໍລິສັດ ລາວສາກົນ ປະເມີນມູນຄ່າຊັບສິນ ຄະນະ;
9. ທ່ານ Li Wei ຜູ້ອຳນວຍການບໍລິສັດ ລາວເຈິ່ງຊິນ ປະເມີນມູນຄ່າຊັບສິນ ຄະນະ.

**ມາດຕາ 4.** ຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ມີພາລະບົດບາດ, ສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

- ຄົ້ນຄວ້າສ້າງແຜນການເຄື່ອນໄຫວໃນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຄະນະ ພ້ອມທັງ ແບ່ງວຽກງານ, ໜ້າທີ່ ແລະ ຄວາມຮັບຜິດຊອບ ໃຫ້ແຕ່ລະຄົນພາຍໃນຄະນະຢ່າງຈະແຈ້ງ ຕາມການກຳນົດໃນມາດຕານີ້ ແລະ ນຳສິ່ງແຜນດັ່ງການຕໍ່ ຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ;

- ແຕ່ງຕັ້ງຜູ້ປະສານງານ ຫຼື ຜູ້ຊ່ວຍວຽກ ເພື່ອຊ່ວຍວຽກຄະນະຊົມລົມບໍລິສັດປະເມີນມູນຄ່າຊັບສິນ ທີ່ມີຕົວແທນ ຫຼື ຕາງໜ້າ ມາຈາກບໍລິສັດປະເມີນມູນຄ່າຊັບສິນ ເປັນຈຸດສຸມກາງ ຕິດຕໍ່ປະສານສົມທົບຊຶ່ງກັນ ບໍລິສັດປະເມີນມູນຄ່າຊັບສິນ ແຕ່ລະແຫ່ງ, ຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ແລະ ປະຕິບັດຕາມການມອບໝາຍຂອງຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ພ້ອມທັງນຳສົ່ງ ລາຍຊື່ຜູ້ປະສານງານ ຕໍ່ຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ;
- ຄົ້ນຄວ້າການສ້າງກົດລະບຽບ ແລະ ລະບຽບພາຍໃນຂອງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ໃຫ້ສອດຄ່ອງກັບລະບຽບກົດໝາຍກ່ຽວຂ້ອງ;
- ຄົ້ນຄວ້າກຳນົດຫຼັກການ ແລະ ມາດຕະຖານການປະເມີນມູນຄ່າຊັບສິນເປັນຕົ້ນ ປະເມີນມູນຄ່າທີ່ດິນ, ສິ່ງກໍ່ສ້າງ, ເຄື່ອງຈັກ, ອຸປະກອນ, ສັນຍາເຊົ່າ, ສັນຍາສຳປະທານ, ສິດທິບັດ ຫລື ຊັບສິນທາງປັນຍາ;
- ຄົ້ນຄວ້າສ້າງຫຼັກສູດ, ຈັດຝຶກອົບຮົມ, ຈັດສອບເສັງ ແລະ ຄົ້ນຄວ້າສ້າງເງື່ອນໄຂຂອງການຂຶ້ນທະບຽນ ນັກວິຊາຊີບປະເມີນມູນຄ່າຊັບສິນ;
- ຄົ້ນຄວ້າ ສ້າງຈັນຍາບັນຂອງບໍລິສັດແລະ ນັກວິຊາຊີບ ໃຫ້ສອດຄ່ອງກັບລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;
- ຄົ້ນຄວ້າກຳນົດອັດຕາຄ່າບໍລິການກ່ຽວກັບການປະເມີນມູນຄ່າຊັບສິນຂັ້ນຕ່ຳ;
- ຄົ້ນຄວ້າແຜນການເຄື່ອນໄຫວປະຈຳປີ ແລະ ແຜນງົບປະມານບໍລິຫານຊົມລົມບໍລິສັດປະເມີນມູນຄ່າຊັບສິນ ພ້ອມທັງນຳສົ່ງຕໍ່ຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ;
- ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດທີ່ຕິດພັນກັບການເຄື່ອນໄຫວຂອງຊົມລົມບໍລິສັດປະເມີນມູນຄ່າຊັບສິນ;
- ຈັດກອງປະຊຸມປະຈຳເດືອນຂອງຄະນະສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ພາຍໃນວັນທີ 25 ຂອງທຸກເດືອນ ພ້ອມທັງນຳສົ່ງບົດບັນທຶກກອງປະຊຸມມາຍັງຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ພາຍໃນວັນທີ 1 ຂອງເດືອນຖັດໄປ;
- ລາຍງານຄວາມຄືບໜ້າໃນການປະຕິບັດສິດແລະໜ້າທີ່ ທີ່ໄດ້ກຳນົດໄວ້ໃນມາດຕານີ້ ທຸກໆ ພາຍໃນວັນທີ 15 ຂອງເດືອນຖັດໄປ, ໄຕມາດ, 6 ເດືອນ, ປີ ຕໍ່ຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ;
- ຄົ້ນຄ້ວາສັງລວມລາຍງານຜົນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນ ແລະ ພ້ອມທັງນຳສົ່ງບົດຄົ້ນຄ້ວາດັ່ງກ່າວຕໍ່ຄະນະປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ 5 ວັນລັດຖະການກ່ອນຈັດປະຊຸມປະຈຳໄຕມາດ;
- ນຳສະເໜີຜົນການຈັດຕັ້ງປະຕິບັດຜົນການຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ຂອງຕົນຕໍ່ກອງປະຊຸມປະຈຳໄຕມາດ ຂອງຄະນະປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ໃນທຸກໆວັນທີ 30 ຂອງເດືອນທີສາມ ຂອງໄຕມາດ. ກໍລະນີ ມື້ຈັດກອງປະຊຸມ ກົງກັບ ມື້ພັກລັດຖະການ ຫຼື ວັນ ເສົາ-ອາທິດ ແມ່ນໃຫ້ຈັດກອງປະຊຸມໃນມື້ຖັດໄປ;
- ທຸກການປ່ຽນແປງ ສິດ ແລະ ໜ້າທີ່ ຕ້ອງລາຍງານ ແລະ ສະເໜີຕໍ່ຄະນະທີ່ປຶກສາໃນການສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ ເພື່ອພິຈາລະນາກ່ອນປັບປຸງ;

- ຄະນະທີ່ຖືກແຕ່ງຕັ້ງຢູ່ໃນມາດຕາ 3 ຂອງມາດຕານີ້ ມີອາຍຸການ 1 ປີ ແລະ ສາມາດ ເລືອກຕັ້ງຄືນໃໝ່ໄດ້ ຕາມການຕົກລົງເຫັນດີຂອງ ຊົມລົມບໍລິສັດປະເມີນມູນຄ່າຊັບສິນ ແລະ ຜ່ານການຄົ້ນຄ້ວາຮັບຮອງຈາກ ສໍານັກງານ ຄຄຊ;
- ປະຕິບັດຕາມການມອບໝາຍວຽກອື່ນໆຈາກຄະນະທີ່ປຶກສາໃນການກະກຽມສ້າງຕັ້ງຊົມລົມບໍລິສັດປະເມີນມູນຄ່າຊັບສິນ.

**ມາດຕາ 5.** ບັນດາທ່ານ ທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້, ແບ່ງໜ້າທີ່ຄວາມຮັບຜິດຊອບ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 6.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າສໍານັກງານ ຄຄຊ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ສໍານັກງານ ຄຄຊ

**ສາຍສະໝອນ ຈັນທະຈັກ**